**Democracy Voucher Program**

ໂຄງການອອກເອກະສານຮັບຮອງເພື່ອສົ່ງເສີມປະຊາທິປະໄຕ (Democracy Voucher Program) ແມ່ນຢູ່ໃນການບໍລິຫານ-ຈັດການໂດຍ Seattle Ethics and Elections Commission.

ສຶກສາເພີ່ມເຕີມກ່ຽວກັບໂຄງການ ແລະ ຊອກຫາຜູ້ລົງສະໝັກເລືອກຕັ້ງທີ່ເຂົ້າຮ່ວມທີ່:

**www.seattle.gov/democracyvoucher**

ኣማርኛ • العربية • ខ្មែរ • 中文 (繁體) • 中文 (简体)
**Filipino/Tagalog** • 日本語 • 한국어 • ລາວ
**Oromoo** • **Русский** • **Soomaali** • **Español** • ไทย
ትግርኛ • **Українська** • Tiếng Việt

ທ່ານອາດຮ້ອງຂໍເອກະສານຮອງຮັບເພື່ອສົ່ງເສີມປະຊາທິປະໄຕຂອງທ່ານເປັນພາສາທີ່ທ່ານເລືອກໂດຍຕິດຕໍ່ພວກເຮົາທີ່ (206) 727-8855 ຫຼື democracyvoucher@seattle.gov.

## ສິ່ງອຳນວຍຄວາມສະດວກ

ຕາມການຮ້ອງຂໍເອກະສານຮອງຮັບນີ້, Seattle Ethics and Elections Commission ຈະໃຫ້ສິ່ງອຳນວຍຄວາມສະດວກທີ່ສົມເຫດສົມຜົນແກ່ບຸກຄົນທີ່ມີຄວາມພິການ ເພື່ອຊ່ວຍຮັບປະກັນການເຂົ້າເຖິງໂຄງການຕ່າງໆ.

## ຕິດຕາມພວກເຮົາທາງສື່ສັງຄົມອອນໄລ

@democracyvoucher
(ໃບຮັບຮອງທີ່ມີມູນຄ່າ ແລະ ສາມາດນຳໄປໃຊ້ໃນການອອກສຽງເລືອກຕັ້ງເພື່ອສົ່ງເສີມປະຊາທິປະໄຕ)

@sea_elections
(ການເລືອກຕັ້ງໃນເມືອງຊີແອັດໂທ)

@democracyvoucherprogram
(ໂຄງການເພື່ອອອກໃບຮັບຮອງທີ່ມີມູນຄ່າ ແລະ ສາມາດນຳໄປໃຊ້ໃນການອອກສຽງເລືອກຕັ້ງເພື່ອສົ່ງເສີມປະຊາທິປະໄຕ)



**ສຽງຂອງທ່ານມີຄວາມສຳຄັນ.**

# ໃຊ້ເອກະສານຮອງຮັບ ເພື່ອສົ່ງເສີມປະຊາທິປະໄຕ (Democracy Vouchers) ໃນປີ 2023 ການເລືອກຕັ້ງໃນເມືອງຊີແອັດໂທ



**City of Seattle**

Lao




## ເອກະສານຮອງຮັບເພື່ອສິ່ງເສີມປະຊາທິປະໄຕ (DEMOCRACY VOUCHERSS) ແມ່ນຫຍັງ?

ຜູ້ຢູ່ອາໄສໃນເມືອງຊີແອັດໂທໄດ້ຮັບເອກະສານຮອງຮັບໃນມູນຄ່າ $25 ທີ່ໃຊ້ເພື່ອສະໜັບສະໜູນຜູ້ລົງສະໝັກເລືອກຕັ້ງທີ່ກໍາລັງລົງແຂ່ງຂັນສໍາລັບສະພາເມືອງຊີແອັດໂທ.

### ຂ້າພະເຈົ້າຈະສາມາດໄດ້ຮັບໃບຮັບຮອງທີ່ມີມູນຄ່າເພື່ອນໍາໃຊ້ໃນການເລືອກຕັ້ງສິ່ງເສີມປະຊາທິປະໄຕ (Democracy Vouchers) ໄດ້ແນວໃດ?

ຖ້າທ່ານເປັນຜູ້ມີສິດອອກຄະແນນສຽງທີ່ໄດ້ລົງທະບຽນໃນເມືອງຊີແອັດໂທ, ທ່ານຈະໄດ້ຮັບໃບຮັບຮອງທີ່ມີມູນຄ່າເພື່ອນໍາໃຊ້ໃນການເລືອກຕັ້ງສິ່ງເສີມປະຊາທິປະໄຕ (Democracy Voucher) ໂດຍອັດຕະໂນມັດທາງໄປສະນີ. ທ່ານ **ບໍ່** ຕ້ອງເປັນຜູ້ມີສິດລົງຄະແນນສຽງເພື່ອໃຊ້ເອກະສານຮອງຮັບເພື່ອສິ່ງເສີມປະຊາທິປະໄຕ.

ຜູ້ຢູ່ອາໄສໃນເມືອງຊີແອັດໂທທີ່ມີອາຍຸຢ່າງໜ້ອຍ 18 ປີ ແລະ ເປັນພົນລະເມືອງສະຫະລັດ, ມີສັນຊາດສະຫະລັດ ຫຼື ເປັນຜູ້ຢູ່ອາໄສຖາວອນທີ່ຖືກຕ້ອງຕາມກົດໝາຍ (ຜູ້ຖືບັດຂຽວ) ອາດໄດ້ຮັບເອກະສານຮອງຮັບໂດຍຕິດຕໍ່ຫ້ອງການຂອງພວກເຮົາ.

### ຂ້າພະເຈົ້າຈະສາມາດໃຫ້ເອກະສານຮັບຮອງທີ່ມີມູນຄ່າເພື່ອນໍາໃຊ້ໃນການເລືອກຕັ້ງສິ່ງເສີມປະຊາທິປະໄຕ (Democracy Vouchers) ຂອງຂ້າພະເຈົ້າແກ່ໃຜ?

ທ່ານສາມາດໃຫ້ເອກະສານຮອງຮັບໜຶ່ງໃບຂຶ້ນໄປແກ່ຜູ້ລົງສະໝັກເລືອກຕັ້ງທີ່ກໍາລັງເຂົ້າຮ່ວມໃນໂຄງການ. ເອກະສານຮອງຮັບເພື່ອສິ່ງເສີມປະຊາທິປະໄຕແມ່ນສາມາດມອບໃຫ້ຜູ້ລົງສະໝັກເລືອກຕັ້ງໃນສະພາເມືອງຊີແອັດໂທຢູ່ພາຍໃນ ຫຼື ພາຍນອກເຂດສະພາຂອງທ່ານ.

ຄົ້ນຫາລາຍຊື່ຜູ້ລົງສະໝັກເລືອກຕັ້ງທີ່ຖືກອັບເດດແລ້ວໃນເວບໄຊຂອງພວກເຮົາ.

**ຜູ້ລົງສະໝັກເລືອກຕັ້ງທີ່ເຂົ້າຮ່ວມ**

## ການເຂົ້າຮ່ວມຂອງທ່ານຈະສ້າງຜົນກະທົບ.

ໂຄງການອອກເອກະສານຮັບຮອງເພື່ອສິ່ງເສີມປະຊາທິປະໄຕ (Democracy Voucher Program) ຊ່ວຍໃຫ້ຜູ້ຢູ່ອາໄສໃນເມືອງຊີແອັດໂທ ມີສ່ວນຮ່ວມໃນການເລືອກຕັ້ງທ້ອງຖິ່ນ ແລະ ຫຼຸດຜ່ອນອຸປະສັກໃນການລົງສະໝັກຮັບເລືອກຕັ້ງ ໂດຍຈັດຫາແຫຼ່ງເງິນທຶນໃຫ້.

### ນັບຕັ້ງແຕ່ການເລີ່ມຕົ້ນຂອງໂຄງການອອກເອກະສານຮັບຮອງເພື່ອສິ່ງເສີມປະຊາທິປະໄຕ (Democracy Voucher Program):

ຈໍານວນຂອງຜູ້ຢູ່ອາໄສໃນເມືອງຊີແອັດໂທທີ່ບໍລິຈາກເຂົ້າໃນການເລືອກຕັ້ງຫາສຽງທ້ອງຖິ່ນເພີ່ມຂຶ້ນສາມເທົ່າ.

68% ຂອງຜູ້ລົງສະໝັກເລືອກຕັ້ງໄດ້ເຂົ້າຮ່ວມໂຄງການ.

ໂຄງການໄດ້ແຈກຢາຍຫຼາຍກວ່າ 7$ ລ້ານໃບສໍາລັບການລົມນະລົງໃນເມືອງຊີແອັດໂທ.

## ຮຽນຮູ້ເພີ່ມເຕີມ. ມີສ່ວນຮ່ວມ.

**www.seattle.gov/democracyvoucher**

## ວັນທີສໍາຄັນ

**ວັນທີ 21 ກຸມພາ 2023**
ເອກະສານຮອງຮັບເພື່ອສິ່ງເສີມປະຊາທິປະໄຕແມ່ນມີໃຫ້ເປັນຄັ້ງທໍາອິດ.

**ວັນທີ 1 ສິງຫາ 2023**
ການເລືອກຕັ້ງຂັ້ນຕົ້ນ

**ວັນທີ 7 ພະຈິກ 2023**
ການເລືອກຕັ້ງທົ່ວໄປ

